ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ຄະນະກຳມະການແຫ່ງຊາດ ເພື່ອຕ້ານ

ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ເລກທີ: 07/ຄຕຟງ

ນະຄອນຫຼວງວຽງຈັນ, ວັນທີ 19 MAY 2015

# ຂໍ້ຕົກລົງ

## ວ່າດ້ວຍ ການກຳນົດຜູ້ຄຸ້ມຄອງວຽກງານການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບບໍລິສັດຫຼັກຊັບ

- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 364/ນຍ, ລົງວັນທີ 13 ຕຸລາ 2014;
- ອີງຕາມໜັງສືສະເໜີຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ ສະບັບເລກທີ 438/ໜຕຟງ, ລົງວັນທີ 05/5/ 2015.

## ປະທານຄະນະກຳມະການແຫ່ງຊາດ ເພື່ອຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດຜູ້ຄຸ້ມຄອງວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບບໍລິສັດຫຼັກຊັບ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີຄວາມຄ່ອງຕົວ ແລະ ມີປະສິດທິຜົນ ແນໃສ່ໃຫ້ການຄຸ້ມຄອງມີຄວາມເປັນເອກະພາບ ແລະ ລວມສູນ.

### ມາດຕາ 2 ການຄຸ້ມຄອງບັນດາບໍລິສັດຫຼັກຊັບ

ມອບໃຫ້ຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຜູ້ຊີ້ນຳສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຄົ້ນຄວ້າອອກນິຕິກຳ, ດຳເນີນການກວດກາ ແລະ ການປະເມີນຄວາມສ່ຽງກ່ຽວກັບວຽກງານການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕໍ່ກັບບໍລິສັດຫຼັກຊັບ.

### ມາດຕາ 3 ການຈັດຕັ້ງປະຕິບັດ

ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ພ້ອມທັງຮັບປະກັນບໍ່ໃຫ້ມີຜົນກະທົບໃນເວລາເຄື່ອນໄຫວວຽກງານຂອງຕົນ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 4 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກຳມະການແຫ່ງຊາດ ເພື່ອຕ້ານ
ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ດຣ.ບຸນປອນ ບຸດຕະນະວົງ